ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****************

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0204 /ກປ.2003.

ວຽງຈັນ, ວັນທີ 3 OCT 2003

# ລະບຽບການ

## ວ່າດ້ວຍ ການສ້າງຕັ້ງ ແລະ ຄຸ້ມຄອງປ່າຜະລິດ ແບບຍືນນານ

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 01-96, ລົງວັນທີ 11 ຕຸລາ 1996.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 59/ນຍ, ລົງວັນທີ 22 ພຶດສະພາ 2002 ວ່າດ້ວຍການຄຸ້ມຄອງປ່າຜະລິດ ແບບຍືນນານ.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 89/ນຍ, ລົງວັນທີ 22 ມິຖຸນາ 1999 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.

ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກລະບຽບການ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ລະບຽບການ ສະບັບນີ້ວາງອອກ ແນໃສ່ ເພື່ອຄຸ້ມຄອງ ການນຳໃຊ້ປ່າໄມ້, ຜະລິດຕະພົນປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນນານ ຢູ່ໃນຂອບເຂດປ່າຜະລິດ ໂດຍມີການເຂົ້າຮ່ວມຂອງອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການວັດຖຸດິບ ດ້ານໄມ້ ແລະ ຜະລິດຕະພົນປ່າໄມ້ ໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຊຶ່ງບໍ່ມີຜົນກະທົບທາງລົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ຮັບປະກັນໃຫ້ວຽກງານຄຸ້ມຄອງປົກປັກຮັກສາ ແລະ ນຳໃຊ້ປ່າຜະລິດໃນຂອບເຂດທົ່ວປະເທດ, ໄດ້ຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ ແລະ ສອດຄ່ອງຕາມນະໂຍບາຍຂອງລັດຖະບານ, ລະບຽບກົດໝາຍ ແລະ ຫຼັກວິຊາການ.

**ມາດຕາ 2. ຫຼັກການລວມ**

ລະບຽບການສະບັບນີ້ໄດ້ກຳນົດຫຼັກການ ແລະ ຂັ້ນຕອນໃນການສ້າງຕັ້ງ ແລະ ຄຸ້ມຄອງເຂດປ່າຜະລິດແບບຍືນນານ ໃນຂອບເຂດທົ່ວປະເທດ. ຫຼັກການ ແລະ ຂັ້ນຕອນໃນການສ້າງຕັ້ງເຂດປ່າຜະລິດ ແມ່ນສາມາດນຳໃຊ້ໄດ້ໃນທຸກໆພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີເງື່ອນໄຂກາຍເປັນປ່າຜະລິດ. ສ່ວນຫຼັກການ ແລະ ຂັ້ນຕອນ ໃນການຄຸ້ມຄອງ ແບບຍືນນານນັ້ນສາມາດ

ນຳໃຊ້ໄດ້ສະເພາະ ພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ປະກາດສ້າງຕັ້ງແລ້ວເທົ່ານັ້ນ. ສຳລັບການດຳເນີນ ບັນດາກິດຈະກຳຕ່າງໆ ຢູ່ໃນພື້ນທີ່ໆໄດ້ສະເໜີ ສ້າງຕັ້ງ ເປັນເຂດປ່າຜະລິດ ແຕ່ຍັງບໍ່ທັນໄດ້ຮັບອະນຸມັດ ຢ່າງເປັນທາງການນັ້ນ, ຕ້ອງໄດ້ປະຕິບັດຕາມຈຸດປະສົງຂອງການສ້າງຕັ້ງ ແລະ ຄຸ້ມຄອງພາຍໃຕ້ລະບຽບກົດໝາຍ.

ມາດຕາ 3. ນິຍາມ

1. ປ່າຜະລິດ ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ຊຶ່ງຖືກຈັດແບ່ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ເສດຖະກິດ - ສັງຄົມແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ດ້ານໄມ້ ແລະ ຜະລິດຕະພັນປ່າໄມ້ ຢ່າງເປັນປົກກະຕິ ຕະຫຼອດໄປ ຊຶ່ງບໍ່ມີຜົນກະທົບ ຢ່າງຮ້າຍແຮງ ຕໍ່ສິ່ງແວດລ້ອມ.
2. ເຂດປ່າຜະລິດ ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຄຸນລັກສະນະ ຄົບຖ້ວນ ຕາມນິຍາມປ່າຜະລິດ; ສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມລະບຽບຫຼັກການ, ເປັນພື້ນທີ່ປ່າໄມ້ທີ່ລວມມີຫຼາຍປະເພດປ່າ ແລະ ໄດ້ຮັບ ການຈັດແບ່ງເຂດ ຂອງແຕ່ລະ ປະເພດປ່າ ຕາມກຳນົດໝາຍທາງດ້ານ ວິຊາການ ເພື່ອຈັດສັນ ພາຍໃຕ້ ລະບົບ ການຄຸ້ມຄອງແບບຍືນນານ ໂດຍມີການເຂົ້າຮ່ວມ ຂອງປະຊາຊົນ.
3. ເຂດຄຸ້ມຄອງ ປ່າຜະລິດ ລະດັບແຂວງ ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນ[illegible] ການກຳນົດຂຶ້ນ ຢູ່ໃນເຂດ ປ່າຜະລິດ ຕາມ ເຂດແດນ ການປົກຄອງ ຂອງແ[illegible] ແລະ ເຂດພິເສດ.
4. ເຂດຄຸ້ມຄອງປ່າຜະລິດ ລະດັບເມືອງ ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້[illegible] ກຳນົດຂຶ້ນ ຢູ່ໃນເຂດປ່າຜະລິດ ລະດັບແຂວງ ຕາມເຂດແດນ ການປົກຄອງຂອງເມືອງ.
5. ເຂດຄຸ້ມຄອງປ່າຜະລິດລະດັບບ້ານ ຫຼື ກຸ່ມບ້ານ ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ຮັບການກຳນົດຂຶ້ນຢູ່ໃນເຂດຄຸ້ມຄອງປ່າຜະລິດ ລະດັບເມືອງ ຕາມເຂດແດນການປົກຄອງຂອງໜຶ່ງບ້ານ ຫຼື ຫຼາຍບ້ານ ເພື່ອດຳເນີນການຄຸ້ມຄອງ ແລະ ນຳໃຊ້ ແບບຍືນນານ.
6. ເຂດຈັດສັນປ່າຜະລິດ ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ຢູ່ໃນເຂດປ່າຜະລິດທີ່ໄດ້ກຳນົດຂຶ້ນ ເພື່ອດຳເນີນ ການວາງແຜນຄຸ້ມຄອງ, ນຳໃຊ້, ຟື້ນຟູ, ປູກ ແລະ ປົກປັກຮັກສາ ຕາມແຜນການຈັດສັນ ທີ່ໄດ້ຜ່ານການຮັບຮອງເອົາ ຢ່າງເປັນທາງການ.
7. ໜ່ວຍຄຸ້ມຄອງປ່າຜະລິດ ແມ່ນການຈັດຕັ້ງໜຶ່ງ ຂອງລັດ ຊຶ່ງມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າຜະລິດ ແບບຍືນນານ ຂອງເມືອງ ແລະ ຂຶ້ນກັບໜ່ວຍງານປ່າໄມ້ເມືອງ.
8. ການຈັດຕັ້ງປ່າໄມ້ບ້ານ ແມ່ນການຈັດຕັ້ງໜຶ່ງ ຂອງປະຊາຊົນທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນບ້ານເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງບ້ານ ໂດຍມີນາຍບ້ານ ເປັນປະທານ.

9. ຂໍ້ຕົກລົງຮ່ວມກັນ ແມ່ນເອກະສານ ກ່ຽວກັບການຄຸ້ມຄອງເຂດປ່າຜະລິດ ທີ່ໜ່ວຍຄຸ້ມຄອງປ່າຜະລິດ ແລະ ການຈັດຕັ້ງປ່າໄມ້ບ້ານ ໄດ້ຕົກລົງຮ່ວມກັນ ຊຶ່ງປະກອບດ້ວຍ ສິດ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃນການຈັດຕັ້ງປະຕິບັດບັນດາກິດຈະກຳຄຸ້ມຄອງເຂດປ່າຜະລິດ, ການແກ້ໄຂຂໍ້ຂັດແຍ່ງ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ ທັງນີ້ກໍເພື່ອບັນລຸຈຸດປະສົງຂອງການຄຸ້ມຄອງ ປ່າຜະລິດ ແບບຍືນນານ.

## ພາກທີ II

## ການສ້າງຕັ້ງ ແລະ ການປ່ຽນແປງ ເຂດປ່າຜະລິດ

**ມາດຕາ 4.** ຫຼັກການ ໃນການກຳນົດ ເຂດປ່າຜະລິດ.

ອີງໃສ່ຂໍ້ມູນການສຳຫຼວດສະພາບພື້ນທີ່ປ່າໄມ້ທົ່ວປະເທດ ແລະ ການເດີນສຳຫຼວດພາກສະໜາມຕົວຈິງໃນເບື້ອງຕົ້ນ, ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ ຮ່ວມກັນກຳນົດພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອນຳສະເໜີຂໍສ້າງຕັ້ງເປັນເຂດປ່າຜະລິດ. ມາດຕະຖານໃນການກຳນົດ ເຂດປ່າຜະລິດ ມີດັ່ງນີ້ :

1. ບໍ່ແມ່ນປ່າປ້ອງກັນ ແລະ ປ່າສະຫງວນ ລະດັບຊາດ ລວມທັງເຂດເຊື່ອມຕໍ່, ບໍ່ກວມເອົາເຂດບູລິມະສິດທີ່ກຳນົດໄວ້ເພື່ອເປັນເຂດຍຸດທະສາດປ້ອງກັນຊາດ ແລະ ກໍ່ສ້າງພື້ນຖານໂຄງລ່າງເພື່ອການພັດທະນາ ເຊັ່ນ: ເຂດອຸດສາຫະກຳ, ເຂດກະສິກຳຖາວອນ, ເຂດວັດທະນະທຳ ແລະ ການທ່ອງທ່ຽວ, ເຂດສະຫງວນ ເພື່ອການຄົມມະນາຄົມ ແລະ ອື່ນໆ.
2. ບໍ່ກວມເອົາ ເນື້ອທີ່ປ່າໄມ້, ດິນປ່າໄມ້ ແລະ ດິນກະສິກຳ ທີ່ໄດ້ຈັດແບ່ງໃຫ້ບຸກຄົນ ຫຼື ນິຕິບຸກຄົນ ນຳໃຊ້.
3. ສາມາດ ກວມເອົາເຂດແດນ ການປົກຄອງຂອງຫຼາຍບ້ານ, ຫຼາຍເມືອງ ແລະ ຫຼາຍແຂວງ.
4. ໄກຈາກຊາຍແດນ ລະຫວ່າງຊາດ ຢ່າງໜ້ອຍ 5 ກິໂລແມັດ.
5. ມີເນື້ອທີ່ ບໍ່ຕ່ຳກວ່າ 5.000 ເຮັກຕາ.

**ມາດຕາ 5.** ຂັ້ນຕອນການສ້າງຕັ້ງເຂດປ່າຜະລິດ

ກະຊວງກະສິກຳ ແລະ ປ່າໄມ້ ນຳສະເໜີເອກະສານຂໍສ້າງຕັ້ງເປັນເຂດປ່າຜະລິດຕໍ່ຫ້ອງວ່າການສຳນັກງານນາຍົກ ລັດຖະມົນຕີ ເພື່ອຂໍອະນຸມັດຈາກນາຍົກລັດຖະມົນຕີ. ເອກະສານຢັ້ງຢືນ ດ້ານວິຊາການ ກ່ຽວກັບຄວາມເໝາະສົມຂອງເຂດທີ່ຈະສ້າງຕັ້ງເປັນເຂດປ່າຜະລິດປະກອບດ້ວຍ :

1. ບົດລາຍງານກ່ຽວກັບຜົນຂອງການສຳຫຼວດ ຂໍ້ມູນສະພາບພື້ນທີ່ ແລະ ເສດຖະກິດ-ສັງຄົມ.
2. ແຜນທີ່ສະແດງ ທີ່ຕັ້ງ ແລະ ຂອບເຂດ ມາດຕາສ່ວນ ນ້ອຍສຸດ 1:50.000.
3. ບົດບັນທຶກກ່ຽວກັບການປຶກສາຫາລືຂອງບັນດາການຈັດຕັ້ງຕ່າງໆ ແລະ ອຳນາດການປົກຄອງ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການສ້າງຕັ້ງເຂດປ່າຜະລິດ.

ມາດຕາ 6. ການປ່ຽນແປງ ເຂດແດນ ຂອງເຂດປ່າຜະລິດ.

ໃນ ກໍລະນີ ຕ້ອງການປ່ຽນແປງ ເຂດແດນຂອງເຂດປ່າຜະລິດ ຄືນໃໝ່, ພະແນກ ກະສິກຳ ແລະ ປ່າໄມ້ ຕ້ອງລະເໜີເຫດຜົນຕ່າງໆພ້ອມທັງຈຸດທີ່ຕັ້ງ ແລະ ເຂດແດນ ທີ່ຕ້ອງການປ່ຽນແປງ ທີ່ພົວພັນກັບແຜນການຈັດສັນ ແລະ ຄຸ້ມຄອງເຂດປ່າຜະລິດ. ພ້ອມກັນນັ້ນ ກໍ່ຕ້ອງໄດ້ເປັນເອກະພາບກັບເມືອງ ແລະ ແຂວງທີ່ກ່ຽວຂ້ອງເສຍກ່ອນ ແລ້ວສົ່ງໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ແລະ ນຳສະເໜີ ຂໍອະນຸມັດຈາກນາຍົກລັດຖະມົນຕີ.

## ພາກທີ III

## ການຄຸ້ມຄອງ ເຂດປ່າຜະລິດ

### ໝວດທີ 1

### ການສ້າງແຜນການຈັດສັນ ແລະ ແຜນການຄຸ້ມຄອງ ເຂດປ່າຜະລິດ

ມາດຕາ 7. ການສ້າງແຜນການ ຈັດສັນ ເຂດປ່າຜະລິດ

ພາຍຫຼັງ ເຂດປ່າຜະລິດໄດ້ຮັບການສ້າງຕັ້ງ ຢ່າງເປັນທາງການແລ້ວ ພະແນກກະສິກຳ ແລະ ປ່າໄມ້ (ຂະແໜງປ່າໄມ້) ແລະ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ (ໜ່ວຍຄຸ້ມຄອງປ່າຜະລິດ) ຕ້ອງປະສານສົມທົບ ກັບອຳນາດ ການປົກຄອງ ແລະ ປະຊາຊົນ ທ້ອງຖິ່ນ ເພື່ອດຳເນີນ ການສຳຫຼວດ ເກັບກຳຂໍ້ມູນຕົວຈິງ ເພື່ອສ້າງແຜນຈັດສັນ ເຂດປ່າຜະລິດ ບົນພື້ນຖານ ການຊີ້ນຳທາງດ້ານວິຊາການ ຈາກ ກົມປ່າໄມ້. ຫຼັກການສຳຄັນ ໃນການສ້າງແຜນຈັດສັນປະກອບດ້ວຍ :

1. ການກຳນົດ ເຂດຄຸ້ມຄອງ ນຳໃຊ້ ຕ້ອງຈັດແບ່ງເປັນ ເຂດຄຸ້ມຄອງ ລະດັບແຂວງ, ເມືອງ ແລະ ບ້ານ ໂດຍຖືເອົາ ເຂດແດນ ການປົກຄອງຂອງແຂວງ, ເມືອງ ແລະ ບ້ານ ເປັນບ່ອນກຳນົດ. ເຂດຄຸ້ມຄອງ ລະດັບແຂວງ ແລະ ເມືອງ ຕ້ອງນອນ ຢູ່ໃນ ເຂດແດນ ຂອງແຂວງ ແລະ ເມືອງດຽວ. ສ່ວນເຂດຄຸ້ມຄອງ ລະດັບບ້ານ ສາມາດ ກວມເອົາ ເຂດແດນຂອງໜຶ່ງ ກຸ່ມບ້ານ ຫຼື ບ້ານ ອີງຕາມເງື່ອນໄຂ ທາງດ້ານລະບຽບກົດໝາຍ, ຫຼັກວິຊາການ, ພູມີປະເທດ ແລະ ຈຸດພິເສດທາງດ້ານ ວັດທະນະທຳ - ສັງຄົມ ຂອງທ້ອງຖິ່ນ. ນອກຈາກນີ້ ພື້ນທີ່ໆມີຄຸນຄ່າສູງ ທາງດ້ານ ປະຫວັດສາດ, ທຳມະຊາດ ແລະ ວັດທະນະທຳ ທີ່ຢູ່ໃນເຂດປ່າຜະລິດ ກໍ່ຕ້ອງໄດ້ ຮັບການ ກຳນົດໄວ້ຢ່າງຈະແຈ້ງ.
2. ການກຳນົດເຂດ ຂອງແຕ່ລະ ປະເພດປ່າ ຢູ່ໃນເຂດປ່າຜະລິດ: ພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ຢູ່ໃນເຂດປ່າຜະລິດ ຕ້ອງໄດ້ຮັບ ການກຳນົດ ແລະ ຈັດແບ່ງເປັນ ແຕ່ລະເຂດ ຕາມຈຸດພິເສດ ສະພາບຕົວຈິງຂອງປະເພດປ່າໄມ້ ເພື່ອເປົ້າໝາຍດຳເນີນການຄຸ້ມຄອງ ສະເພາະເປັນຕົ້ນ: ເຂດປ່າໄມ້ ເພື່ອດຳເນີນການຂຸດຄົ້ນ, ເຂດປ່າໄມ້ ເພື່ອປ້ອງກັນ ແຫຼ່ງນ້ຳ ແລະ ສິ່ງແວດລ້ອມຕ່າງໆ; ເຂດປ່າໄມ້ເພື່ອສະຫງວນໄວ້ສຳລັບການສຶກສາຄົ້ນຄວ້າ, ແຫຼ່ງທຳມະ

ຊາດ, ປະຫວັດສາດ ແລະ ວັດທະນາທຳ - ສັງຄົມຕ່າງໆ; ເຂດປ່າໄມ້ ເພື່ອການຟື້ນຟູ ແລະ ເຂດປ່າໄມ້ອື່ນໆ ເພື່ອດຳເນີນການຄຸ້ມຄອງສະເພາະ ຕາມລະບຽບຫຼັກການ.

3. ການດຳເນີນການສຳຫຼວດ: ຕ້ອງປະຕິບັດຕາມຫຼັກການ ແລະ ຂັ້ນຕອນ ທາງດ້ານເຕັກນິກ-ວິຊາການ ແລະ ລະບຽບການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກຳນົດອອກ.

ມາດຕາ 8. ການຮັບຮອງ ແລະ ປັບປຸງ ແຜນການຈັດສັນ

1. ຄະນະດຳເນີນ ການສຳຫຼວດ ຕ້ອງສ້າງ ແຜນການຈັດສັນ ເຂດປ່າຜະລິດ ໂດຍອີງໃສ່ ຂໍ້ມູນ ທີ່ໄດ້ຈາກ ການສຳຫຼວດ ຕົວຈິງ ແລະ ເຮັດເປັນບົດລາຍງານ ຄົບຊຸດ ຕາມ ຂັ້ນຕອນ ແລະ ຫຼັກການ ທາງດ້ານ ວິຊາການ ຜ່ານ ພະແນກ ກະສິກຳ ແລະ ປ່າໄມ້ ແລະ ກົມປ່າໄມ້ ເຂົ້າສູ່ກອງປະຊຸມ ສະພາ ວິທະຍາສາດ-ເຕັກນິກ ກະສິກຳ ແລະ ປ່າໄມ້ ພິຈາລະນາ ແລ້ວ ນຳສະເໜີຕໍ່ ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ຮັບຮອງ.

8.2 ແຜນການ ຈັດສັນ ເຂດປ່າຜະລິດ ມີກຳນົດ ເວລາໃຊ້ໄດ້ ສູງສຸດ ບໍ່ເກີນ 10 ປີ, ໃນ ກໍລະນີ ມີຄວາມຈຳເປັນ ຕ້ອງການປັບປຸງ ແຜນການຈັດສັນ ເຂດປ່າຜະລິດ ຕ້ອງໄດ້ປະກອບ ເອກະສານ ນຳສະເໜີ ຜ່ານ ຕາມ ຂັ້ນຕອນຕ່າງໆ ເຊັ່ນດຽວກັນກັບ ຂັ້ນຕອນ ທີ່ໄດ້ສະເໜີ ຮັບຮອງເອົາ ແຜນການ ຈັດສັນ ເຂດປ່າຜະລິດ.

ມາດຕາ 9: ການສ້າງ ແຜນຄຸ້ມຄອງ ເຂດປ່າຜະລິດ.

ພະແນກກະສິກຳ ແລະ ປ່າໄມ້ (ຂະແໜງປ່າໄມ້) ຕ້ອງໄດ້ສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ/ໜ່ວຍງານປ່າໄມ້ເມືອງ (ໜ່ວຍຄຸ້ມຄອງປ່າຜະລິດ) ແລະ ການຈັດຕັ້ງປ່າໄມ້ບ້ານ ເພື່ອດຳເນີນການສ້າງແຜນຄຸ້ມຄອງເຂດປ່າຜະລິດ ເປັນໄລຍະຍາວ ( 10 ປີ ), ໄລຍະກາງ ( 5 ປີ ) ແລະ ໄລຍະສັ້ນ ( ແຜນການດຳເນີນງານປະຈຳປີ ) ໂດຍໃຫ້ ສອດຄ່ອງກັບນະໂຍບາຍ, ລະບຽບກົດໝາຍ, ແຜນຈັດສັນ, ແຜນພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ ແລະ ຂອງທ້ອງຖິ່ນ.

ມາດຕາ 10: ການຮັບຮອງ ແລະ ປັບປຸງ ແຜນການ ຄຸ້ມຄອງ ເຂດປ່າຜະລິດ.

1. ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ຮັບຮອງເອົາ ແຜນການ ຄຸ້ມຄອງ ແຕ່ລະໄລຍະ ຂອງເຂດຄຸ້ມຄອງ ປ່າຜະລິດ ລະດັບ ກຸ່ມບ້ານ ຫຼື ບ້ານ. ພະແນກກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງເອົາແຜນການຄຸ້ມຄອງແຕ່ລະໄລຍະ ຂອງເຂດຄຸ້ມຄອງປ່າຜະລິດ ລະດັບເມືອງ. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງເອົາແຜນການຄຸ້ມຄອງປ່າຜະລິດ ແຕ່ລະໄລຍະ ຂອງເຂດຄຸ້ມຄອງປ່າຜະລິດ ລະດັບແຂວງ ຫຼື ຂອງທົ່ວເຂດປ່າຜະລິດ.

2. ໃນກໍລະນີ ມີຄວາມຈຳເປັນ ຕ້ອງການ ປັບປຸງ ແຜນການ ຄຸ້ມຄອງ ເຂດປ່າຜະລິດ ແຕ່ລະໄລຍະ, ການຈັດຕັ້ງຂັ້ນ ທີ່ກ່ຽວຂ້ອງ ຕ້ອງໄດ້ປະກອບເອກະສານ ສະເໜີຕໍ່ການຈັດຕັ້ງຂັ້ນທີ່ມີສິດຮັບຮອງ ແຜນການນັ້ນ ພິຈາລະນາ.

3. ກ່ອນຈະປ່ຽນແປງ ແຜນການຄຸ້ມຄອງ ເຂດປ່າຜະລິດ ໃນແຕ່ລະໆດັບ ແຕ່ລະຄັ້ງ ຕ້ອງໄດ້ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາເສຍກ່ອນ. ແຜນການດັ່ງກ່າວຈະໄດ້ ຮັບ ການປ່ຽນແປງ ຫາກເຫັນວ່າ ບັນດາ ກິດຈະກຳ ແລະ ຮູບການ ນຳໃຊ້ ຊັບພະຍາກອນ ຢູ່ໃນເຂດປ່າຜະລິດ ບໍ່ສອດຄ່ອງ ເປັນສາຍເຫດໃຫ້ ຊັບພະຍາກອນ ປ່າໄມ້ ປ່ຽນແປງໄປ ໃນທາງລົບ ຢ່າງຈະແຈ້ງ.

## ໝວດທີ 2

## ບັນດາໜ້າວຽກ ໃນການຄຸ້ມຄອງເຂດປ່າຜະລິດ

### ມາດຕາ 11: ການຕົກລົງຮ່ວມ ໃນການຄຸ້ມຄອງ ເຂດປ່າຜະລິດ.

ພາຍໃຕ້ ການຊີ້ນຳຂອງ ພະແນກ ກະສິກຳ ແລະ ປ່າໄມ້, ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ຕ້ອງໄດ້ແນະນຳໜ່ວຍຄຸ້ມຄອງປ່າຜະລິດ ແລະ ການຈັດຕັ້ງປ່າໄມ້ບ້ານ ສ້າງຂໍ້ຕົກລົງຮ່ວມ ກັນກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງເຂດປ່າຜະລິດໃຫ້ສອດຄ່ອງກັບແຜນການຈັດ ສັນ ແລະ ຄຸ້ມຄອງທີ່ໄດ້ວາງໄວ້. ຂໍ້ຕົກລົງຮ່ວມຕ້ອງໄດ້ເຊັນຮ່ວມກັນ ລະຫວ່າງໜ່ວຍຄຸ້ມຄອງປ່າ ຜະລິດ ແລະ ການຈັດຕັ້ງປ່າໄມ້ບ້ານ ໂດຍມີການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ມີກຳນົດນຳໃຊ້ໄດ້ ເທົ່າກັບອາຍຸຂອງແຜນການຈັດສັນເຂດປ່າຜະລິດ ແລະ ສາມາດ ປ່ຽນແປງໄດ້ ໂດຍມີການຕົກລົງຮ່ວມກັນ ຈາກທຸກຝ່າຍ.

### ມາດຕາ 12: ການໝາຍ ຂອບເຂດຂອງປ່າຜະລິດ.

ພາຍຫຼັງ ໄດ້ສຳເລັດການວາງແຜນຈັດສັນແລ້ວ ໜ່ວຍຄຸ້ມຄອງປ່າຜະລິດ ແລະ ການຈັດ ຕັ້ງປ່າໄມ້ບ້ານຕ້ອງໄດ້ດຳເນີນ ການໝາຍຂອບເຂດປ່າຜະລິດຕົວຈິງ ໂດຍມີການຕິດປ້າຍບອກ ເຂດແດນ ແລະ ຂໍ້ມູນສຳຄັນຕ່າງໆ ຂອງເຂດປ່າຜະລິດ, ເຂດຄຸ້ມຄອງ-ນຳໃຊ້, ເຂດຂອງແຕ່ລະ ປະເພດປ່າ ແລະ ຈຸດພິເສດສຳຄັນອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນແຜນຈັດສັນ ບົນພື້ນຖານການ ປຶກສາຫາລື ກັບອຳນາດການປົກຄອງທ້ອງຖິ່ນ ແລະ ການເຂົ້າຮ່ວມຂອງການຈັດຕັ້ງປ່າໄມ້ບ້ານ.

### ມາດຕາ 13: ການຂຸດຄົ້ນໄມ້.

1. ໜ່ວຍຄຸ້ມຄອງ ປ່າຜະລິດ ຮ່ວມກັບການຈັດຕັ້ງປ່າໄມ້ບ້ານ ເປັນຜູ້ຄຸ້ມຄອງການຂຸດຄົ້ນໄມ້ ຢູ່ໃນເຂດປ່າຜະລິດ ຕາມລະບຽບຫຼັກການໃນການຄຸ້ມຄອງປ່າຜະລິດແບບຍືນນານ ທີ່ໄດ້ກຳ ນົດໄວ້ໃນບັນດາກົດໝາຍຂອງລັດ, ລະບຽບການ ແລະ ຂໍ້ແນະນຳ ທີ່ກະຊວງກະສິກຳ ແລະ ປ່າໄມ້ວາງອອກ.
2. ບັນດາໜ້າວຽກທີ່ຕ້ອງໄດ້ດຳເນີນໃນການຄຸ້ມຄອງການຂຸດຄົ້ນໄມ້ ມີຄື : ການສຳຫຼວດກ່ອນ ການຂຸດຄົ້ນ, ການຄັດເລືອກ ແລະ ໝາຍຕົ້ນໄມ້ເພື່ອຕັດ, ການສ້າງ ແຜນການຂຸດຄົ້ນ, ການ

ຈັດຕັ້ງປະຕິບັດແຜນການຂຸດຄົ້ນ, ການຂຶ້ນບັນຊີໄມ້ທີ່ຕັດແລ້ວ, ການຕິດຕາມກວດກາການຂຸດຄົ້ນ ແລະ ການປະເມີນຜົນ ຫຼັງການຂຸດຄົ້ນ.

3. ບໍລິມາດໄມ້ທີ່ຈະຂຸດຄົ້ນອອກຈາກເຂດປ່າຜະລິດໃນແຕ່ລະປີ ຂອງແຕ່ລະແຂວງຕ້ອງບໍ່ເກີນຄວາມອາດສາມາດ ໃນການເຕີບໃຫຍ່ຂະຫຍາຍຕົວຂອງປ່າໄມ້ ຊຶ່ງໄດ້ກຳນົດໄວ້ໃນແຜນການຈັດສັນ ແລະ ຕ້ອງສອດຄ່ອງກັບແຜນການດຳເນີນງານປະຈຳປີ.

ມາດຕາ 14: ການປູກໄມ້ ແລະ ຟື້ນຟູປ່າໄມ້.

ວຽກງານ ປູກໄມ້ ແລະ ຟື້ນຟູປ່າໄມ້ ຢູ່ໃນເຂດປ່າຜະລິດ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດບົນພື້ນຖານການປະສານສົມທົບກັບບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ຕ້ອງໃຫ້ສອດຄ່ອງກັບແຜນການຈັດສັນ, ແຜນການຄຸ້ມຄອງ ແຕ່ລະໄລຍະ, ຂໍ້ຕົກລົງຮ່ວມ ກ່ຽວກັບ ການຄຸ້ມຄອງປ່າໄມ້ ແລະ ສັນຍາຕ່າງໆ ພາຍໃຕ້ກົດໝາຍ, ລະບຽບການ ແລະ ຂໍ້ແນະນຳ ທາງດ້ານວິຊາການຕ່າງໆ ທີ່ລັດໄດ້ກຳນົດໄວ້.

ມາດຕາ 15: ການປົກປັກຮັກສາ ແລະ ປ້ອງກັນຊັບພະຍາກອນປ່າໄມ້.

ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໂດຍສະເພາະແມ່ນເຂດປ້ອງກັນ, ເຂດສະຫງວນ, ສັດນ້ຳ, ສັດປ່າ ແລະ ບັນດາຊີວະນາງພັນທຸກຊະນິດ ທີ່ຢູ່ໃນເຂດປ່າຜະລິດ ຕ້ອງໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ຂະຫຍາຍພັນຕາມແຜນການຈັດສັນ, ແຜນການຄຸ້ມຄອງແຕ່ລະໄລຍະ, ຂໍ້ຕົກລົງຮ່ວມກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ສັນຍາຕ່າງໆ ພາຍໃຕ້ກົດໝາຍ, ລະບຽບການ ແລະ ຂໍ້ແນະນຳ ທາງດ້ານວິຊາການຕ່າງໆ ທີ່ລັດໄດ້ກຳນົດໄວ້.

ມາດຕາ 16: ການຄຸ້ມຄອງ ຜະລິດຕະພັນປ່າໄມ້.

ຜະລິດຕະພັນປ່າໄມ້ຕ່າງໆ ຢູ່ໃນຂອບເຂດປ່າຜະລິດ ຕ້ອງໄດ້ຮັບການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ຂະຫຍາຍພັນຕາມກົດໝາຍ, ລະບຽບການ ແລະ ບົດແນະນຳດ້ານວິຊາການສະເພາະທີ່ລັດໄດ້ກຳນົດໄວ້, ໃນນັ້ນ ລວມທັງ ສິດຊົມໃຊ້ຕາມປະເພນີ.

## ໝວດທີ 3

## ການຄຸ້ມຄອງ ລາຍຮັບ ທີ່ໄດ້ຈາກ ເຂດປ່າຜະລິດ

ມາດຕາ 17: ການຂາຍໄມ້ ທີ່ຂຸດຄົ້ນ ອອກຈາກ ເຂດປ່າຜະລິດ.

1. ພາຍຫຼັງທີ່ລັດຖະບານໄດ້ອະນຸມັດຕົວເລກແຜນການຂຸດຄົ້ນໄມ້ປະຈຳປີ ໃຫ້ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດແລ້ວ ພະແນກກະສິກຳ ແລະ ປ່າໄມ້ ຕ້ອງໄດ້ສົມທົບກັບບັນດາພະແນກການກ່ຽວຂ້ອງຕ່າງໆ ເພື່ອດຳເນີນການຊື້-ຂາຍໄມ້ ເປັນຕົ້ນແມ່ນ ຕົວແທນຈາກແຕ່ລະພາກສ່ວນ ເຊັ່ນ: ພະແນກການຄ້າ, ພະແນກການເງິນ, ໜ່ວຍຄຸ້ມຄອງປ່າຜະລິດ

ແລະ ການຈັດຕັ້ງປ່າໄມ້ບ້ານພາຍໃຕ້ການຊີ້ນຳຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ຫົວໜ້າເຂດພິເສດ.

2. ການຊື້-ຂາຍໄມ້ທ່ອນ ທີ່ຂຸດຄົ້ນອອກຈາກເຂດປ່າຜະລິດຕ້ອງປະຕິບັດຕາມລະບຽບການທີ່ກະຊວງການຄ້າໄດ້ກຳນົດໄວ້, ມີຄວາມໂປ່ງໃສດ້ວຍຮູບການແຂ່ງຂັນລາຄາ ແລະ ຕ້ອງຂາຍໃຫ້ໂຮງງານປຸງແຕ່ງໄມ້,ບັນດາພາກສ່ວນທີ່ມີໃບອະນຸຍາດດຳເນີນທຸລະກິດໄມ້ຈາກຂະແໜງການກ່ຽວຂ້ອງ ໂດຍຖືເອົາລະໜາມ II ເປັນບ່ອນໄລ່ລຽງ ແລະ ມອບຮັບໄມ້ທ່ອນ. ມູນຄ່າໃນການຂາຍໄມ້ດ້ວຍຮູບການແຂ່ງຂັນລາຄາປະກອບມີ: ຄ່າພັນທະຂາຍໄມ້, ຄ່າພັນທະປູກໄມ້, ຄ່າຂຸດຄົ້ນ ແລະ ຈຳນວນເງິນສ່ວນເກີນທີ່ໄດ້ຈາກການຂາຍໄມ້ ແບບແຂ່ງຂັນລາຄາ.

3. ໂດຍອີງໃສ່ ຕົວເລກແຜນການຂຸດຄົ້ນໄມ້ ປະຈຳປີທີ່ລັດຖະບານໄດ້ອະນຸມັດ ແລະ ບັນຊີໄມ້ຢືນຕົ້ນຈາກການສຳຫຼວດກ່ອນການຂຸດຄົ້ນທີ່ໄດ້ຜ່ານການຄັດເລືອກ ໝາຍຕົ້ນຕັດແລ້ວ, ພະແນກການຄ້າແຂວງຈະເປັນຜູ້ເຊັນສັນຍາຊື້ - ຂາຍໄມ້, ຈາກນັ້ນ ພະແນກກະສິກຳ ແລະ ປ່າໄມ້ ຈຶ່ງອອກອະນຸຍາດຂຸດຄົ້ນໃຫ້ ເພື່ອນຳໄປຈັດຕັ້ງປະຕິບັດຢູ່ໃນແຕ່ລະເຂດປ່າຜະລິດ.

ມາດຕາ 18: ການແບ່ງປັນ ລາຍຮັບ ຈາກ ການຂາຍໄມ້ ທີ່ຂຸດຄົ້ນ ຢູ່ໃນເຂດ ປ່າຜະລິດ.

ລາຍຮັບ ທີ່ໄດ້ຈາກ ການຂາຍໄມ້ ທີ່ຂຸດຄົ້ນອອກຈາກປ່າຜະລິດ ເປັນຕົ້ນແມ່ນ ເງິນພັນທະຂາຍໄມ້ຕ້ອງໄດ້ມອບເຂົ້າງົບປະມານແຫ່ງຊາດ. ສ່ວນລາຍຮັບສ່ວນເກີນທີ່ໄດ້ຈາກການແຂ່ງຂັນລາຄາຂາຍໄມ້ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍງົບປະມານ ເພື່ອລວມສູນທີ່ມີລາຍຮັບທຸກທາງດ້ານ ໂດຍຈົດຮັບ - ຈົດຈ່າຍນຳຂະແໜງ ຄຸ້ມຄອງ ຊັບສິນຂອງລັດ ແລະ ໃຫ້ແບ່ງອອກເປັນ 2 ສ່ວນ ດັ່ງນີ້ :

1. ສ່ວນທີ 1 ມອບເຂົ້າ ງົບປະມານ ( ເພີ່ມຄ່າ ຊັບພະຍາກອນ ທຳມະຊາດ) 30% ຂອງເງິນສ່ວນເກີນ.

2. ສ່ວນທີ 2 ແບ່ງປັນເຂົ້າກອງທຶນຕ່າງໆ 70% ຂອງເງິນສ່ວນເກີນ ເຊັ່ນ :

- 20% ເປັນກອງທຶນພັດທະນາປ່າໄມ້ ເພື່ອຕອບສະໜອງເປົ້າໝາຍທີ່ໄດ້ກຳນົດໄວ້ ໃນມາດຕາ 47 ຂອງກົດໝາຍປ່າໄມ້.
- 25% ເປັນກອງທຶນສຳລັບການຄຸ້ມຄອງເຂດປ່າຜະລິດຢູ່ໃນທ້ອງຖິ່ນ ຊຶ່ງລວມເປັນລາຍຈ່າຍຕ່າງໆເພື່ອຈັດຕັ້ງປະຕິບັດກິດຈະກຳທີ່ໄດ້ກຳນົດໄວ້ໃນແຜນການດຳເນີນງານປະຈຳປີ.
- 25% ເປັນກອງທຶນພັດທະນາທ້ອງຖິ່ນ, ກອງທຶນດັ່ງກ່າວຕ້ອງໄດ້ຮັກສາໄວ້ຢູ່ທະນາຄານ ໃນບັນຊີຂອງກຸ່ມບ້ານ ຫຼື ບ້ານ (ໃນກໍລະນີຈຳເປັນ) ເພື່ອເປົ້າໝາຍການພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ. ການນຳໃຊ້ກອງທຶນດັ່ງກ່າວຕ້ອງອີງໃສ່ລະບຽບຫຼັກການທາງດ້ານການເງິນ ແລະ ຕ້ອງສອດຄ່ອງ ກັບແຜນການພັດທະນາ ໂດຍແມ່ນ ປະຊາຊົນເປັນຜູ້ສ້າງຂຶ້ນ ແລະ ຖືກຮັບຮອງຈາກຄະນະກຳມະການພັດທະນາຂອງເມືອງຜ່ານການປະສານສົມທົບກັບຫ້ອງການກະສິກຳ ແລະປ່າໄມ້ເມືອງ.

## ໝວດທີ 4

## ການຕິດຕາມ ແລະ ກວດກາ

**ມາດຕາ 19:** ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບ ເຂດປ່າຜະລິດ

ບັນດາ ຂໍ້ມູນ ຂ່າວສານຕ່າງໆ ກ່ຽວກັບ ເຂດປ່າຜະລິດ ແລະ ການຄຸ້ມຄອງ ປ່າຜະລິດ ໃນຂອບເຂດ ທົ່ວປະເທດ ຕ້ອງໄດ້ເກັບຮັກສາໄວ້ ຢູ່ພາຍໃນ ກະຊວງ ກະສິກຳ ແລະ ປ່າໄມ້ ເພື່ອໃຫ້ສາມາດ ທົບທວນ ແລະ ຕິດຕາມ ກວດກາໄດ້ ຢ່າງເປັນລະບົບ.

**ມາດຕາ 20:** ລະບົບຂອງການຕິດຕາມກວດກາ

1. ລະບົບຂອງການຕິດຕາມກວດກາ ວຽກງານ ຄຸ້ມຄອງ ເຂດປ່າຜະລິດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນໝວດທີ 2 ພາກທີ V ຂອງກົດໝາຍປ່າໄມ້, ບັນດາລະບຽບການສະເພາະຕ່າງໆ ແລະ ແຜນການຈັດສັນທີ່ໄດ້ວາງໄວ້.
2. ໃນ ກໍລະນີ ທີ່ເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ດຳເນີນ ວຽກງານ ການຕິດຕາມ ກວດກາ ສະພາບປ່າໄມ້ຢູ່ໃນເຂດປ່າຜະລິດຕາມການສະເໜີ ຂອງ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ການຈັດຕັ້ງສຳລັບການຄຸ້ມຄອງປ່າຜະລິດແຕ່ລະຂັ້ນ ຕ້ອງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານນີ້.

**ມາດຕາ 21:** ເນື້ອໃນ ຂອງ ການຕິດຕາມ ກວດກາ

ການຕິດຕາມກວດກາ ແມ່ນຂະບວນການທົບທວນ ການຈັດຕັ້ງປະຕິບັດ ແຜນທຸລະກິດປະກຳ ໃນ ການຄຸ້ມຄອງປ່າໄມ້ ເຊັ່ນ : ແຜນການຈັດສັນ, ແຜນຄຸ້ມຄອງ, ແຜນການດຳເນີນງານປະຈຳປີ, ຂໍ້ຕົກລົງກ່ຽວກັບການຄຸ້ມຄອງປ່າໄມ້ ຫຼື ບັນດາສັນຍາຕ່າງໆ, ການບໍລິຫານວຽກງານ, ບັນຊີ - ການເງິນ ແລະ ວຽກງານອື່ນໆ ທີ່ພົວພັນກັບວຽກງານຄຸ້ມຄອງເຂດປ່າຜະລິດ.

**ມາດຕາ 22:** ການລາຍງານ ກ່ຽວກັບ ການຕິດຕາມກວດກາ ວຽກງານ.

ໜ່ວຍຄຸ້ມຄອງປ່າຜະລິດ ແລະ ການຈັດຕັ້ງປ່າໄມ້ບ້ານ ຕ້ອງໄດ້ລາຍງານຂໍ້ມູນຂ່າວສານຕ່າງໆ ກ່ຽວກັບການດຳເນີນວຽກງານຄຸ້ມຄອງປ່າຜະລິດຕົວຈິງໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຂະແໜງປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ ເພື່ອສັງລວມແລ້ວ ລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ( ກົມປ່າໄມ້ ) ເປັນແຕ່ລະໄລຍະ ເຊັ່ນ : 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ. ການລາຍງານ ກ່ຽວກັບ ການຕິດຕາມ ແລະ ກວດກາ ແມ່ນແນໃສ່ :

- ປະເມີນຜົນ ກ່ຽວກັບ ຜົນສຳເລັດ ໃນ ການຈັດຕັ້ງປະຕິບັດ ແຜນການຕ່າງໆ.
- ປະເມີນປະສິດທິພາບຂອງການນຳໃຊ້ເຕັກນິກ-ວິຊາການ ເຂົ້າໃນການຄຸ້ມຄອງເຂດປ່າຜະລິດ.
- ປະເມີນ ສະພາບ ການພັດທະນາ ເສດຖະກິດ - ສັງຄົມຂອງທ້ອງຖິ່ນ.
- ປະເມີນສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ຊີວະນາໆພັນ.

## ໝວດທີ 5

## ການຈັດຕັ້ງ, ສິດ ແລະ ໜ້າທີ່ ໃນ ການຄຸ້ມຄອງ ເຂດປ່າຜະລິດ

ມາດຕາ 23: ການຈັດຕັ້ງ ໜ່ວຍຄຸ້ມຄອງ ປ່າຜະລິດ.

ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ຂອງທຸກໆເມືອງ ທີ່ມີເຂດປ່າຜະລິດ ຕ້ອງໄດ້ຈັດຕັ້ງໜ່ວຍຄຸ້ມຄອງເຂດປ່າຜະລິດຂຶ້ນ ເພື່ອເປັນຫົວໜ່ວຍຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າຜະລິດແບບຍືນນານ ພາຍໃຕ້ການຊີ້ນຳຂອງພະແນກ ກະສິກຳ ແລະ ປ່າໄມ້.

ມາດຕາ 24: ການຈັດຕັ້ງ ປ່າໄມ້ບ້ານ.

ອຳນາດການປົກຄອງບ້ານທຸກໆບ້ານ ທີ່ມີເຂດປ່າຜະລິດ ຕ້ອງໄດ້ສ້າງຕັ້ງ ການຈັດຕັ້ງປ່າໄມ້ບ້ານຂຶ້ນ, ເພື່ອເປັນຕົວແທນຂອງປະຊາຊົນ ໃນການເຂົ້າຮ່ວມເຄື່ອນໄຫວວຽກງານ ແລະ ຕັດສິນບັນຫາ ກ່ຽວກັບການຄຸ້ມຄອງເຂດປ່າຜະລິດ ຕາມຄວາມສາມາດ ແລະ ຄວາມຮັບຜິດຊອບຂອງຕົນ ພາຍໃຕ້ການຊີ້ນຳຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ມາດຕາ 25. ສິດ ແລະ ໜ້າທີ່ ຂອງ ກົມປ່າໄມ້

1. ເປັນເສນາທິການໃຫ້ກະຊວງກະສິກຳ ແລະ ປ່າໄມ້ໃນການຜັນຂະຫຍາຍ ແລະ ຈັດຕັ້ງ ປະຕິບັດແນວທາງນະໂຍບາຍ ແລະ ແຜນງານລວມຂອງລັດຖະບານໃຫ້ເປັນໂຄງການ ແລະ ແຜນການອັນລະອຽດ ເພື່ອຄຸ້ມຄອງ ປ່າຜະລິດໃນຂອບເຂດ ທົ່ວປະເທດ.
2. ກຳນົດມາດຕະການໃນການຜັນຂະຫຍາຍ ກົດໝາຍປ່າໄມ້ ແລະ ມະຕິ[illegible] ບານດ້ວຍການສ້າງບັນດາລະບຽບການ, ຂໍ້ກຳນົດ, ບົດແນະນຳ ແລະ ຄູ່ມື[illegible] ຄອງປ່າຜະລິດ ເພື່ອນຳສະເໜີ ຕໍ່ຂັ້ນເທິງ ພິຈາລະນາ ແລະ ຮັບຮອງ.
3. ຮັບຜິດຊອບຕໍ່ການກະກຽມຂໍ້ມູນກ່ຽວກັບການສ້າງຕັ້ງ ແລະ ຄຸ້ມຄອງເຂດປ່າຜະລິດ ຫຼື ການປ່ຽນແປງເຂດແດນ ແລະ ແຜນການຈັດສັນເຂດປ່າຜະລິດ ໃນຂອບເຂດທົ່ວປະເທດ ເພື່ອສະເໜີ ຕໍ່ຂັ້ນເທິງພິຈາລະນາ ແລະ ຮັບຮອງ.
4. ຄົ້ນຄ້ວາ, ພິຈາລະນາ ແລະ ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ, ຈັດຕັ້ງປະຕິບັດ ກຳນົດໝາຍດ້ານເຕັກນິກກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າຜະລິດ ແບບຍືນນານ.
5. ຄົ້ນຄ້ວາປະກອບຄຳເຫັນຕໍ່ບັນດາເອກະສານຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າຜະລິດ ແລ້ວສະເໜີ ຂັ້ນເທິງພິຈາລະນາ.
6. ປະສານສົມທົບກັບບັນດາຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາພາກສ່ວນກ່ຽວຂ້ອງອື່ນໆ ໃນການຈັດຕັ້ງປະຕິບັດ, ກວດກາ-ຕິດຕາມ ແລະ ປະເມີນຜົນ ວຽກງານໃນເຂດປ່າຜະລິດຕາມທີ່ໄດ້ຖືກມອບໝາຍ.
7. ຝຶກອົບຮົມໃຫ້ແກ່ພະນັກງານແຂວງເປັນຕົ້ນແມ່ນວິທີການສຳຫຼວດ, ວາງແຜນການຄຸ້ມຄອງ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປະເມີນຜົນວຽກງານ.

8. ພົວພັນ ແລະ ຮ່ວມມື ກັບສາກົນ ໃນການແລກປ່ຽນ ຂໍ້ມູນຂ່າວສານ, ເຕັກນິກ-ວິທະຍາການ ເພື່ອຍົກລະດັບ ຄວາມຮູ້ ຄວາມສາມາດ ທາງດ້ານ ວິຊາການ ແລະ ຍາດແຍ່ງ ທຶນຮອນສຳລັບດຳເນີນການຄຸ້ມຄອງ ແລະ ຈັດສັນປ່າຜະລິດ ແບບຍືນນານໃນຂອບເຂດທົ່ວ ປະເທດ.

ມາດຕາ 26: ສິດ ແລະ ໜ້າທີ່ ຂອງຂະແໜງ ປ່າໄມ້ແຂວງ, ນະຄອນ ແລະ ເຂດພິເສດ

1. ເປັນເສນາທິການໃຫ້ແກ່ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ໃນການວາງແຜນ, ຕິດຕາມ-ກວດກາ ແລະ ຈັດຕັ້ງຄຸ້ມຄອງມະຫາພາກ ຕາມສາຍຕັ້ງຂອງຂະແໜງການປ່າໄມ້ ກ່ຽວກັບວຽກງານຄຸ້ມຄອງປ່າຜະລິດ ໃນທົ່ວແຂວງ.
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນທ້ອງຖິ່ນຂອງຕົນ ເພື່ອຈັດຕັ້ງຄຸ້ມຄອງ, ປູກ, ຟື້ນຟູ ບູລະນະ ແລະ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ຢູ່ໃນເຂດປ່າຜະລິດ.
3. ຄົ້ນຄວ້າ ແລະ ມີຄຳເຫັນ ເພື່ອນຳສະເໜີ ບັນຫາຕ່າງໆ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ກ່ຽວກັບການສ້າງຕັ້ງໜ່ວຍຄຸ້ມຄອງປ່າຜະລິດ ແລະ ການດຳເນີນກິດຈະການຕ່າງໆ ຢູ່ໃນເຂດປ່າຜະລິດ ຕາມການສະເໜີ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
4. ຝຶກອົບຮົມດ້ານວິຊາການ ໃຫ້ແກ່ໜ່ວຍຄຸ້ມຄອງປ່າຜະລິດ ແລະ ປະຊາຊົນ ໃນການດຳເນີນ ວຽກງານ ຄຸ້ມຄອງ ປ່າຜະລິດ ແບບຍືນນານ.
5. ຊີ້ນຳ ແລະ ຈັດຕັ້ງ ການຕິດຕາມກວດກາ ແລະ ປະເມີນຜົນວຽກງານຕ່າງໆໃນເຂດປ່າຜະລິດ.
6. ປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງຕ່າງໆໃນການເຄື່ອນໄຫວ[illegible]

ມາດຕາ 27: ສິດ ແລະ ໜ້າທີ່ ຂອງໜ່ວຍງານ ປ່າໄມ້ເມືອງ

1. ເປັນເສນາທິການໃຫ້ຂະແໜງປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການສ້າງກົດລະບຽບສະເພາະ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າຜະລິດໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ລັດວາງອອກ ແລະ ເງື່ອນໄຂຕົວຈິງຂອງແຕ່ລະເຂດປ່າຜະລິດ.
2. ຕິດຕາມ ກວດກາ ແລະ ປະເມີນຜົນ ກ່ຽວກັບ ການດຳເນີນ ວຽກງານ ໃນເຂດປ່າຜະລິດ.
3. ສ້າງແຜນການ ດຳເນີນງານ ປະຈຳປີ ສຳລັບແຕ່ລະເຂດຄຸ້ມຄອງ ຂອງເຂດປ່າຜະລິດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ,
4. ຝຶກອົບຮົມດ້ານວິຊາການ ກ່ຽວກັບການຄຸ້ມຄອງປ່າຜະລິດແບບຍືນນານໃຫ້ແກ່ພະນັກງານ ແລະ ປະຊາຊົນ.
5. ຈັດຕັ້ງປະຕິບັດມະຕິຄຳສັ່ງຂອງຂັ້ນເທິງກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າຜະລິດ ໃນແຕ່ລະໄລຍະ.
6. ສະຫຼຸບ-ລາຍງານ ກ່ຽວກັບການຄຸ້ມຄອງ ແລະ ການດຳເນີນ ກິດຈະການປ່າໄມ້ໃນເຂດປ່າຜະລິດ ຕາມສິດ ແລະ ໜ້າທີ່ຂອງຕົນ.

7. ປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງຕ່າງໆໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຢູ່ໃນເຂດປ່າຜະລິດ.

ມາດຕາ 28: ສິດ ແລະ ໜ້າທີ່ຂອງໜ່ວຍຄຸ້ມຄອງປ່າຜະລິດ

1. ເປັນຫົວໜ່ວຍວິຊາການ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າຜະລິດຢູ່ໃນຂອບເຂດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.
2. ສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງແຜນຈັດສັນເຂດປ່າຜະລິດ ແລະ ແຜນດຳເນີນງານໃນແຕ່ລະໄລຍະ ໃນຂອບເຂດທີ່ຕົນຮັບຜິດຊອບ.
3. ຈັດຕັ້ງປະຕິບັດ ແຜນຈັດສັນ ແລະ ດຳເນີນງານທີ່ໄດ້ຮັບອະນຸມັດ ໂດຍມີການເຂົ້າຮ່ວມຂອງປະຊາຊົນ.
4. ດຳເນີນການຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບການດຳເນີນວຽກງານຂອງຄູ່ສັນຍາ ຕາມທີ່ໄດ້ຕົກລົງກັນໃນຂໍ້ຜູກພັນໃນສັນຍາ.
5. ຝຶກອົບຮົມດ້ານວິຊາການ ກ່ຽວກັບການຄຸ້ມຄອງປ່າຜະລິດ ແບບຍືນນານ ໃຫ້ແກ່ປະຊາຊົນບັນດາບ້ານທີ່ຂຶ້ນກັບເຂດປ່າຜະລິດ ທີ່ຕົນຮັບຜິດຊອບ.
6. ຊ່ວຍປະຊາຊົນໃນການວາງແຜນ ພັດທະນາເສດຖະກິດ-ສັງຄົມຂອງບ້ານ.
7. ມີສິດສັ່ງໂຈະ, ອາຍັດຊົ່ວຄາວ ຂອງກາງທີ່ລະເມີດລະບຽບກົດໝາຍຂອງລັດ.
8. ສະຫຼຸບລາຍງານໃຫ້ຂັ້ນເທິງຕາມສາຍຕັ້ງ ແລະ ສາຍຂວາງ ກ່ຽວກັບການຄຸ້ມຄອງເຂດປ່າຜະລິດ.
9. ຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າຜະລິດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ມາດຕາ 29. ສິດ ແລະ ໜ້າທີ່ຂອງການຈັດຕັ້ງປ່າໄມ້ບ້ານ.

1 ຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ ແລະ ລະບຽບກົດໝາຍຕ່າງໆ ທີ່ຂັ້ນເທິງວາງອອກ.

2 ເຂົ້າຮ່ວມໃນການຈັດຕັ້ງປະຕິບັດບັນດາກິດຈະກຳຂອງການຄຸ້ມຄອງປ່າຜະລິດ ແບບຍືນນານ ທີ່ກຳນົດໄວ້ໃນແຜນການຈັດສັນເຂດປ່າຜະລິດ ແລະ ເຂົ້າຮ່ວມໃນການແກ້ໄຂບັນຫາວຽກງານຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງປ່າຜະລິດ.

3 ເຂົ້າຮ່ວມໃນການຕິດຕາມ ກວດກາ ແລະ ປ້ອງກັນ ບໍ່ໃຫ້ມີການລະເມີດ ລະບຽບກົດໝາຍທີ່ຈະນຳຜົນເສຍຫາຍແກ່ຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ ຢູ່ໃນເຂດປ່າຜະລິດ.

4 ລາຍງານເຫດການຕ່າງໆທີ່ເກີດຂຶ້ນຢູ່ໃນເຂດປ່າຜະລິດ ໃຫ້ຂັ້ນເທິງ ຊາບເປັນແຕ່ລະໄລຍະ.

5 ຄຸ້ມຄອງການນຳໃຊ້ຊັບພະຍາກອນປ່າໄມ້ ຕາມປະເພນີ ແລະ ການຊົມໃຊ້ຕ່າງໆຂອງປະຊາຊົນ ຕາມລະບຽບກົດໝາຍ.

## ໝວດທີ 6

## ນະໂຍບາຍ ຕໍ່ ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 30. ບັນດາ ຂໍ້ຫ້າມຕ່າງໆ ຢູ່ໃນເຂດ ປ່າຜະລິດ

1. ຫ້າມທັບປ່ຽນ ເຂດແດນຂອງ ປ່າຜະລິດ ໂດຍບໍ່ໄດ້ຮັບ ອະນຸຍາດ ຕາມ ລະບຽບ ຫຼັກການ.
2. ຫ້າມທັບປ່ຽນຮູບແບບການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຢູ່ໃນເຂດປ່າຜະລິດ ຊຶ່ງກຳນົດໄວ້ໃນແຜນຈັດສັນ ແລະ ແຜນຄຸ້ມຄອງ ຢ່າງເດັດຂາດ, ເວັ້ນເສຍແຕ່ໄດ້ຜ່ານການທົບທວນ ແລະ ໄດ້ຮັບອະນຸຍາດໃຫ້ທັບປ່ຽນ ຕາມລະບຽບຫຼັກການ.
3. ຫ້າມດຳເນີນກິດຈະກຳຕ່າງໆ ທີ່ບໍ່ໄດ້ກຳນົດໄວ້ໃນແຜນຈັດສັນ ແລະ ແຜນຄຸ້ມຄອງປ່າຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ.
4. ຫ້າມລະເມີດ ທຸກໆລະບຽບກົດໝາຍ, ຫຼັກການ ເຕັກນິກ-ວິຊາການ ແລະ ຂໍ້ແນະນຳຕ່າງໆ ທີ່ວາງອອກສຳລັບການຄຸ້ມຄອງນຳໃຊ້, ຟື້ນຟູບູລະນະ ແລະ ປົກປັກຮັກສາຊັບພະຍາກອນປ່າໄມ້ ຢູ່ໃນເຂດປ່າຜະລິດ.
5. ຫ້າມດຳເນີນ ກິດຈະກຳຕ່າງໆ ທີ່ເຫັນວ່າຈະເປັນຜົນກະທົບອັນບໍ່ດີ ຕໍ່ປ່າໄມ້, ດິນ, ສັດນ້ຳ - ສັດປ່າ, ສິ່ງແວດລ້ອມ ແລະ ອື່ນໆ ຢູ່ໃນເຂດປ່າຜະລິດ.

### ມາດຕາ 31. ນະໂຍບາຍ ຕໍ່ ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນປ່າໄມ້ ແບບຍືນນານ ຢູ່ໃນເຂດປ່າຜະລິດ ຫຼື ຊ່ວຍໃນການປ້ອງກັນບໍ່ໃຫ້ມີການກະທຳຜິດ ຕໍ່ລະບຽບກົດໝາຍ ຈະໄດ້ຮັບຍ້ອງຍໍຊົມເຊີຍ ຕາມລະບຽບການ.

### ມາດຕາ 32. ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ ກົດໝາຍປ່າໄມ້, ລະບຽບການ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງປ່າຜະລິດ ແບບຍືນນານ ແລະ ລະບຽບການຕ່າງໆ ຈະຖືກປະຕິບັດມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69, 70, 71, 72 ແລະ 73 ຂອງກົດໝາຍປ່າໄມ້ ແລະ ກົດໝາຍອື່ນໆ ວາງອອກ.

### ມາດຕາ 33. ການແກ້ໄຂ ຂໍ້ຂັດແຍ່ງ

1. ຂໍ້ຂັດແຍ່ງ ລະຫວ່າງ ອົງການຈັດຕັ້ງຂອງລັດ; ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງບ້ານ ຫຼື ປະຊາຊົນ ກ່ຽວກັບການດຳເນີນກິດຈະກຳ ແລະ ການຕົກລົງຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງເຂດປ່າຜະລິດ ຕ້ອງໄດ້ມີການພິຈາລະນາແກ້ໄຂຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນເອກະສານກ່ຽວກັບການຕົກລົງຮ່ວມກັນໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງປ່າໄມ້ ຫຼື ສັນຍາ ລະຫວ່າງ ພາກສ່ວນກ່ຽວຂ້ອງດ້ວຍກັນ.

2. ໃນເມື່ອຂໍ້ຂັດແຍ່ງ ຫາກບໍ່ສາມາດແກ້ໄຂໄດ້ໃນຂັ້ນຂອງຕົນ ຕ້ອງສະເໜີຕໍ່ການຈັດຕັ້ງຂັ້ນເທິງ ຖັດຕົນ ເປັນຜູ້ພິຈາລະນາ ຕາມ ຂັ້ນຕອນ.

3. ຖ້າຂໍ້ຂັດແຍ່ງໃດ ຫາກບໍ່ສາມາດແກ້ໄຂໄດ້ດ້ວຍການນຳໃຊ້ ລະບົບຂອງອຳນາດບໍລິຫານ ກໍ່ຕ້ອງນຳສະເໜີຕໍ່ ອົງການ ຕຸລາການ ເພື່ອແກ້ໄຂ ຕາມ ລະບຽບກົດໝາຍ.

## ພາກທີ IV

## ບົດບັນຍັດສຸດທ້າຍ

### ມາດຕາ 34. ການຈັດຕັ້ງປະຕິບັດ

1. ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ, ທຸກພາກສ່ວນເສດຖະກິດ ລວມທັງບຸກຄົນ ແລະ ການຈັດຕັ້ງຕ່າງໆ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ ລະບຽບການ ສະບັບນີ້ ໃຫ້ປາກົດ ຜົນເປັນຈິງ.
2. ກົມປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ອຳນາດການປົກຄອງບ້ານ ມີໜ້າທີ່ຈັດຕັ້ງຜັນຂະຫຍາຍ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດລະບຽບການສະບັບນີ້ ຢ່າງທົ່ວເຖິງ.

### ມາດຕາ 35. ຜົນສັກສິດ

ລະບຽບການສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຖ້າ ເຫັນວ່າມາດຕາໃດ ຫຼື ຂໍ້ໃດຂອງລະບຽບການ, ຂໍ້ກຳນົດ, ບົດແນະນຳ ສະບັບອື່ນ ທີ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະກາດໃຊ້ໃນເມື່ອກ່ອນຫາກຂັດກັບເນື້ອໃນຂອງລະບຽບການສະບັບນີ້ ແມ່ນຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ສຽນ ສະພັງທອງ